ຄຳຜາຣົບ

ສັງຄົມລາວເປັນສັງຄົມ ທີ່ມີປະເທດເປັນຂອງຕົນເອງ ຊຶ່ງເຄີຍເປັນປະເທດມະຫາອຳນາດ ດົນນານ ພໍສົມຄວນໃນຂົງເຂດສຸວັນນະພູມ ແລະ ຈະແຕກຕ່າງກັບສັງຄົມ ຂອງຊົນຊາດທີ່ບໍ່ມີປະເທດເປັນຂອງ ຕົນເອງແລະປະເທດທີ່ຕັ້ງຂຶ້ນໃຫມ່ອີກດ້ວຍ ຫມາຍຄວາມວ່າ ເປັນສັງຄົມ ທີ່ມີຮີດຄອງປະເພນີ ແລະ ວັທນະທັນອັນເກົ່າແກ່ພ້ອມທັງມີການຈັດຕັ້ງ ຂັ້ນບ້ານ ຂັ້ນຕາແສງ ຂັ້ນເມືອງ ຂັ້ນແຂວງແລະອື່ນໆອີກ ພາຍໃຕ້ກົດຫມາຍຕລອດມາ ພ້ອມດ້ວຍມາຣະຍາດໃນສັງຄົມ ເຊັ່ນ ການຂີດຂຽນ ການວາງຕົວ ຫລື ການປາກເວົ້າກັບຜູ້ເຖົ້າຜູ້ແກ່ ກັບຜູ້ຫລັກເຈົ້າຈອມ ນຳແມ່ຍ່າແມ່ຍິງ ແລະ ເດັກເລັກເດັກນ້ອຍ ເປັນຕົ້ນ ອັນເປັນການໃຫ້ກຽດຊຶ່ງກັນແລະກັນ ບໍ່ແມ່ນວ່າຢາກໃຊ້ຄຳໃດກໍໃຊ້ໄປຕາມລຳພັງ ເຫມືອນດັ່ງຄົນປ່າ ຄົນດົງ

ຄຳອະທິບາຍ

ການຂຶ້ນປໂຍກໃນພາສາລາວມີກໍຣະນີສຳຄັນຢູ່ດ້ວຍກັນຫລາຍປ່າງ ຄື

1- ດ້ວຍນາມ ຫລືດ້ວຍ ຄຳນາມ (ຄຳນາມ ແມ່ນຄຳທີ່ເປັນນາມ) / ຄວາຍເຖົ້າກິນຫຍ້າອ່ອນ
2- ດ້ວຍສັພນາມ (ແມ່ນຄຳທີ່ໃຊ້ແທນນາມ) / ມັນກິນຫຍ້າແລ້ວບໍ ?
3- ດ້ວຍກິຣິຍາ / ຮູ້ແລ້ວເຖົ້າ ເຂົ້າໃຈແລ້ວຕາຍ / ຟັງຄວາມແກວ ເສັ້ງແນວເຂົ້າປູກ / ໄປກ່ອນສາ
4- ດ້ວຍຄຳອື່ນໆ ແລະ ຂ້າພະເຈົ້າ ຈະບໍ່ກ່າວເຖິງ / ດັ່ງທີ່ໄດ້ກ່າວມາແລ້ວ

ຄວາມສັບສົນໃນການໃຊ້ຄຳລາວຈະຕົກຢູ່ໃນກໍຣະນີທີ່ ຄຳກ່ຽວຂ້ອງນັ້ນເປັນສັພນາມນຶ່ງ ແລະ ເປັນ ຄຳ ທີ່ ໃຊ້ຢູ່ຫນ້າຄຳສັພນາມນັ້ນນຶ່ງ

ຄຳທີ່ເປັນສັພນາມມີຄື ກູ ມຶງ ມັນ ຕູ ສູ ເສົາ ເຂົາ ຂ້ອຍ ຂາ ຂາເຈົ້າ ເຂືອ ເຂືອເຈົ້າ ຂ້າ ຜູ້ຂ້າ ຂ້ານ້ອຍ ຂ້າບາດ ຂ້າພະບາດ ຂ້າພະເຈົ້າ ເຮົາ ຮຽນ ເຜີ ເຜີຂ້າ ຕູຂ້າ ເຈົ້າ ທ່ານ ພຣະອົງ ລາວ ເພີ່ນ ໂຕ ເຮີ ຍ ຍ ລ ຍ ແລະຄຳທີ່ຄົນເຮົາບໍ່ເຄີຍນຳມາສົນທະນາ ເຊັ່ນ ອີ່ນາງ ບັກກິ ບັກທຳ ອີ່ພ່ ອີ່ລູງ ອີ່ປ້າ ນ້າ ຂ້ານ້ອ ແລະອື່ນໆອີກ ຊຶ່ງຄຳເຫລົ່ານີ້ພວກເຮົາຄົງເຂົ້າໃຈໄດ້ ແຕ່ບາງຄັ້ງອາດຈະບໍ່ຮູ້ວິທີໃຊ້

ນອກຈາກນີ້ ກໍຍັງມີຄຳທີ່ເພີ່ນໃຊ້ເປັນນາມຍົດ ເຊັ່ນ ນາງ ທ້າວ ເພັ ຫມື່ນ ແສນ ພຍາ ຂຸນ ພ້ອມທັງຄຳທີ່ໃຊ້ໃນການປົກຄອງແລະໃນສັງຄົມ ດັ່ງ ທ່ານ ທ້າວ ນາງ ຍ ຍ ນ ທ່ານ ທ່ານ (ແຕ່ບໍ່ເວົ້າຈັກເທື່ອວ່າ ທ່ານ ທ່ານ ທ້າວ ທ່ານ ທ່ານ ທ່ານ ທ່ານ ທ່ານ ຊຶ່ງຄົນລາວ ຈະເວົ້າວ່າ ຂ້າເວົ້າ ຫລື ແກ ເວົ້ານ) ອ ຍ ອ ຍ ຍ ຍ ຫ ອ ເ ພ ທ ສ ເ ຟ ແ ຖ ເ ນ ກ ອ ( ) ( ) ( )

ບັນຫາ

ຄົນລາວທີ່ຢູ່ເມືອງນອກກໍບໍ່ສູ້ເວົ້າຄວາມລາວເລື້ອຍ ແລະ ຄົນລາວໃນປະເທດກໍບໍ່ສົນໃຈໃນພາສາຊາດຂອງຕົນພໍປານໃດ ຈຶ່ງພາໃຫ້ການປາກເວົ້າພາສາລາວຈົດຈາງລົງນັບມື້ ຍ້ອນພາກັນຂຽນແລະເວົ້າປັສຈາກການສຶກສາກົດເກນຂອງ <u>ຄວາມລາວ</u> ທີ່ມີມາຕັ້ງແຕ່ດັ້ງເດີມນັ້ນເອງ ປ່ອຍປະລະໄລໄປນຳທຸກມື້

ອີກປະການນຶ່ງ ໃນເມື່ອຂາດການສຶກສາພາສາຊາດຂອງຕົນຢ່າງເຂັ້ມງວດ ແລະ ຕົນເອງກໍໄດ້ຮຽນພາສາຊາວຕາວັນຕົກ ການປາກເວົ້າພາສາລາວໃນປັດຈຸບັນກໍເປັນພຽງແຕ່ <u>ການແປ</u> ມາຈາກພາສາອື່ນ <u>ຫລາຍກວ່າ ການປາກເວົ້າພາສາລາວ</u> ຢ່າງແທ້ຈິງ ເຊັ່ນວ່າ

- ຫລາຍໆທ່ານ ກໍເຄີຍໄດ້ເວົ້າມາແລ້ວ ຊຶ່ງເປັນການປາກເວົ້າທີ່ບໍ່ເຂົ້າກັບພາສາລາວ ບໍ່ເຂົ້າກັບ La logique de la langue lao ຍ້ອນເພີ່ນບໍ່ຂຶ້ນປໂຍກດ້ວຍຄຳວິເສດຈັກເທື່ອ « ຫລາຍ » ແລະ ປໂຍກທີ່ຄວນເວົ້າຄວນຂຽນນັ້ນ ຄື « ທ່ານທັງຫລາຍກໍເຄີຍ... /ທ່ານລາງຄົນ.../ລາງຄົນ...» ໂດຍຜ່ານຄຳສັພນາມ « ທ່ານ » ຂຶ້ນຫນ້າປໂຍກ (ຫລາຍໆທ່ານ.../ຕຸ້ຍໆນາງ ກໍເຄີຍໄດ້ຂຶ້ນມາເວົ້າແລ້ວ)

ຄຳວິເສດມີຄື ຫລາຍ ຫນ້ອຍ ຄ່ອຍ ຈ່ອຍ ພີ ດີ ຕຸ້ຍ ຫນຸ່ຍ ຫນົ່ນ ນົນ ມົນ ນັນ ຈົດ ຈາງ ສົ້ນ ເຄັນ ຮ້ອນ ຂື່ນ ຂົມ ສະອາດ ຮົກ ກວ້າງ ໃຫຍ່ ນ້ອຍ ງາມ ເສົ້າ ເຢັນ ໂງ່ ສລາດ ໄວ ແລະອື່ນໆອີກ

- ທີ່ນາ ທີ່ໄປ ທີ່ຢູ່ ທີ່ນອນ ເປັນຄຳວະລີທີ່ຄົນລາວນິຍົມກັນໃຊ້ຫລາຍທີ່ສຸດໃນປັດຈຸບັນນີ້ ແລະ ຄຳທີ່ເຮົາຄວນເຂົ້າໃຈກໍຄືຄຳ « ທີ່ » ຊຶ່ງເປັນຄຳບຸພບົດ ທີ່ເພີ່ນໃຊ້ຢູ່ຫນ້າ ຄຳນາມນຶ່ງ ຄຳສັພນາມນຶ່ງ ແລະຄຳກິຣິຍານຶ່ງ ອີກປະການນຶ່ງ ເຮົາບໍ່ສາມາດຈະໃຊ້ຄຳເຫລົ່ານີ້ຕາງຄຳນາມທີ່ບອກສະຖານທີ່ ຖ້າເຮົາຢາກໃຊ້ເປັນວະລີ ທີ່ເຂົ້າເນື້ອເຂົ້າຄວາມກັບພາສາລາວ ເຮົາຄວນໃຊ້ « ຄວາມ » ຫລື «ການ» ດັ່ງ ຄວາມເປັນມາ ການໄປ ການມາ ບ່ອນຢູ່ ບ່ອນນອນ ຊຶ່ງຄຳ « ຄວາມ » ຈະບອກສະພາບ ຫລື ອາການ ແລະ ຄຳ « ການ » ຈະຫມາຍເຖິງສິ່ງທີ່ເຮົາເຮັດແລະປະຕິບັດ (ວະລີ=ຈຳພວກຄຳທີ່ຍັງບໍ່ເປັນປໂຍກ)

ຄຳຄິດ

ສິ່ງສຳຄັນທີ່ພວກເຮົາຄວນຄິດນັ້ນກໍຄື ກ່ອນຈະເວົ້າຈະຂຽນຫຍັງລົງໄປ ພວກທີ່ມີຜົມສີຂາວຄວນຄິດໃຫ້ຖີ່ຖ້ວນ ເພາະພວກລຸ້ນນ້ອຍຈະຄອຍຕາມຮອຍເຮົາໄປ ແລະ ຈຸດສຳຄັນຈະເນັ້ນຫນັກໃສ່ພວກທີ່ເວົ້າທີ່ຂຽນຂ່າວເປັນພາສາລາວ

ຕາມປົກຕິ ເພີ່ນຈະໃຊ້ຄຳ ນາມ ສັພນາມ ກິຣິຍາ ຂຶ້ນຫນ້າປໂຍກໃນການປາກເວົ້າພາສາລາວ ແລະການໃຊ້ ຄຳບຸພບົດ ແລະ ຄຳວິເສດ ຂຶ້ນຫນ້າປໂຍດນັ້ນ ຈະເປັນກໍຣະນີພິເສດທີ່ສຸດຈຶ່ງຈະເຮັດໄດ້

1. ສະບາຍດີ ທ່ານທີ່ຮັກແພງແລະນັບຖືທັງຫລາຍ / ສະບາຍດີ ທ່ານນັ້ນທ່ານນີ້ / ຮຽນທ່ານກໍຂໍ ແລະ ເພີ່ນຈະບໍ່ກ່າວว່າ « ຮຽນທຸກໆທ່ານ » (ຢ່າງໄຮ້ຄວາມນັບຖື ຫລື ໄຮ້ການໃຫ້ກຽດ)

- ສະບາຍດີໃຜ ? ທ່ານທີ່ຮັກແພງ ແລະ ທ່ານທີ່ນັບຖື / ສະບາຍດີ ຍາລູງ
- ຈັກຄົນ ? ທ່ານເຫລົ່ານັ້ນມີ(ຢູ່ດ້ວຍກັນ)ຫລາຍຄົນ / ພາສາລາວຈະໃຊ້ຄຳ « ທັງ » ດັ່ງ ທັງໃຫຍ່

ທັງນ້ອຍ ທັງຍິງທັງຊາຍ ທັງຫນົດທັງປວງ ທັງແປດ ທ່ານທັງສອງ ແທນຈຳນວນຫລາຍ ແທນທຸກຄົນ ແລະ ແທນທຸກຢ່າງ ທີ່ມີຄວາມກ່ຽວຂ້ອງ

2. ສະບາຍດີ ທຸກໆທ່ານ

- ຄຳຖາມຈະປີ້ນໄປເປັນ « ຖາມສະບາຍດີຈັກຄົນ ແລະ ຖາມສະບາຍດີໃຜແນ່? » ຕາມປົກຕິ ຄຳຖາມທີ່ຖືກຕ້ອງແທ້ນັ້ນຈະຕັ້ງຕົ້ນດ້ວຍ « ລູກຖາມສະບາຍດີໃຜແນ່ » ໆລຯ

ຂໍ້ສອງຈະມີຂໍ້ຍົກເວັ້ນ ໃນເມື່ອເຮົາຮູ້ວ່າເຮົາກ່າວເຖິງເຣື່ອງຫຍັງກັນແທ້ (Sous entendu) ໃນ ຕອນນັ້ນເຮົາສາມາດກ່າວລັດໄປໂລດ ໂດຍບໍ່ກ່າວເຖິງ « ນາມ » ທີ່ເປັນ « ກັນ / Complément »

ສຳນວນ « ສະບາຍດີ ທຸກໆ ທ່ານ » ຫມາຍເຖິງການຕີຣວດກວດພຽງ ດ້ວຍເຫດນີ້ ການ ຂຶ້ນຕົ້ນ ໃນການກ່າວຄຳສະດຸດີຕ່າງໆ ໃນສັງຄົມລາວແລະການພົບພໍ້ຂັ້ນນານາຊາດ ຈົ່ງໃຊ້ເວລາ

ຄຳສລຸບ

ຖ້າເຮົາເວົ້າພາສາລາວຖືກ ຫລື ເວົ້າບໍ່ຜິດຫລາຍພໍປານໃດ ມັນກໍເປັນຕາຟັງ ຖ້າບໍ່ດັ່ງນັ້ນ ມັນຈະມີ ແນວໃດແນວນຶ່ງ**ຂັດຫູ** ແລະ ໃນເມື່ອປໂຍກໃດຂັດຫູ ກໍຫມາຍຄວາມວ່າປໂຍກນັ້ນ ບໍ່ສອດຄ່ອງກັບ ການປາກເວົ້າໃນພາສາລາວ

ດັ່ງນັ້ນ ການສຶກສາເວຍນາກອນ ຈະເປັນຂີ່ເປັນຫລັກຄ້ຳປະກັນຄວາມແຫນ້ນຫນາ ແລະ ຄວາມ ຫນັ້ນຄົງຂອງພາສາລາວ ເຖິງແມ່ນວ່າ ຫລັກດັ່ງກ່າວນີ້ ຈະບໍ່ໃຫ້ຄວາມພໍໃຈແກ່ພວກເຮົາກໍຈິງ ແຕ່ເຮົາ ຈຳເປັນຈະຕ້ອງມີ ແລະໃນເມື່ອເຮົາມີມັນມາແລ້ວ ເຮົາຈົ່ງສາມາດປັບປຸງໃຫ້ມັນດີຂຶ້ນກວ່າເກົ່າເພື່ອໃຫ້ ເຂົ້າກັບ ຄວາມຕ້ອງການຂອງສັງຄົມ ເຫມືອນດັ່ງພາສາຂອງປະເທດທີ່ຈະເຣີນ ທຸກໆປະເທດ ນັ້ນເອງ

ຂໍອຸທິດຄວາມຄິດອັນນ້ອຍໆອັນນີ້ ແດ່ພຣະເຖຣະນຸເຖຣະ ພ້ອມດ້ວຍຄົນລາວທຸກຖ້ວນຫນ້າ

ເມື່ອວັນທີ ໒໐/ ໑໐/ ໒໐໑໐ ເດືອນ ກັນຍາ ພສ. ໒ ໕ ໕ ມ ແຫ່ງເມືອງ ປາຣີສ ທີ່ປະເທດ ຝຣັ່ງ

ຄຳແພວ ພູເພັຊຣລິນທອງ
K. Phouphetlinthong

This document is licensed under the Attribution 3.0 Unported license, available at http://creativecommons.org/licenses/by/3.0/.

(ທ່ານມີສິດເອົາເອກສານນີ້ໄປປັບປຸງ ແຈກຢາຍ ຫລື ເອົາຂຶ້ນໃສ່ບົນ ເວັບໄຊ ຂອງທ່ານ)